**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງບໍລິຄໍາໄຊ

ພະແນກອຸດສາຫະກໍາ ແລະ ການຄ້າ

ເລກທີ 1478/ພອຄ

ບໍລິຄໍາໄຊ, ວັນທີ໒໗ ສິງຫາ ໒໐໒໐

# ແຈ້ງການ

ເຖິງ: - ທ່ານ ຫົວໜ້າພະແນກກະສິກໍາ - ປ່າໄມ້ແຂວງ

- ທ່ານ ຫົວໜ້າພະແນກການເງິນແຂວງ
- ທ່ານ ປະທານສະພາການຄ້າ ແລະ ອຸດສາຫະກໍາແຂວງ
- ບັນດາຫົວໜ່ວຍດໍາເນີນທຸລະກິດໄມ້

ເລື່ອງ: ກ່ຽວກັບການແຕ່ງຕັ້ງພະນັກງານລົງກວດກາ ແລະ ຢັ້ງຢືນຜະລິດຕະພັນໄມ້ຂັ້ນລົດ ເພື່ອສົ່ງອອກໄປຕ່າງປະເທດຂອງແຕ່ລະຂະແໜງການ.

- ອີງຕາມ ຄໍາສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 12/ນຍ, ລົງວັນທີ 16 ຕຸລາ 2019,ວ່າດ້ວຍການອໍານວຍຄວາມສະດວກໃຫ້ແກ່ ການນໍາເຂົ້າ - ສົ່ງອອກ, ການນໍາເຂົ້າຊົ່ວຄາວ, ການຜ່ານແດນ ແລະ ການເຄື່ອນຍ້າຍສິນຄ້າ ຢູ່ ສປປ ລາວ.
- ອີງຕາມ ແຈ້ງການ ຂອງຫ້ອງວ່າການແຂວງ ສະບັບ ເລກທີ 715/ຫວຂ.ບຊ, ລົງວັນທີ 29 ກໍລະກົດ 2020.

ພະແນກອຸດສາຫະກໍາ ແລະ ການຄ້າແຂວງບໍລິຄໍາໄຊ ຂໍຖືເປັນກຽດແຈ້ງການມາຍັງທ່ານຊາບ: ເພື່ອປະຕິບັດຕາມແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ກໍ່ຄືການຈັດຕັ້ງປະຕິບັດຕາມ ແຜນອໍານວຍຄວາມສະດວກທາງດ້ານການຄ້າແຂວງບໍລິຄໍາໄຊ, ເປັນຕົ້ນ ແມ່ນການກວດກາ ແລະ ຢັ້ງຢືນຜະລິດຕະພັນໄມ້ເພື່ອສົ່ງອອກ ຄືດັ່ງນີ້:

1. ການຢັ້ງຢືນຜະລິດຕະພັນໄມ້ຂັ້ນລົດ ເພື່ອສົ່ງອອກໄປຕ່າງປະເທດ ແມ່ນຈັດຕັ້ງປະຕິບັດຕາມຄໍາສັ່ງແນະນໍາຂອງລັດຖະມົນຕີ ກະຊວງອຸດສາຫະກໍາ ແລະ ການຄ້າ ສະບັບເລກທີ 2143/ອຄ.ກຂອ, ລົງວັນທີ 25 ພະຈິກ 2016 ວ່າດ້ວຍຂັ້ນຕອນການຢັ້ງຢືນ ຜະລິດຕະພັນໄມ້ຂັ້ນລົດ ເພື່ອສົ່ງອອກຕ່າງປະເທດ.

2. ຄະນະກໍາມະການທີ່ຖືກແຕ່ງຕັ້ງຈາກຂະແໜງການທີ່ກ່ຽວຂ້ອງເພື່ອລົງກວດກາ, ຢັ້ງຢືນ, ໜີບກົວລົດສິນຄ້າ ແລະ ເຊັນປິດບັນທຶກຮ່ວມກັນ ໃຫ້ປະກອບມີຜູ້ຕາງໜ້າພາກສ່ວນລະ 01 ທ່ານເທົ່ານັ້ນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ໃຫ້ການຮ່ວມມືຕາມເຫັນສົມຄວນດ້ວຍ.

**ຫົວໜ້າພະແນກອຸດສາຫະກໍາ ແລະ ການຄ້າ**

ກະຊວງອຸດສາຫະກໍາ ແລະ ການຄ້າ
ພະແນກ ອຸດສາຫະກໍາ ແລະ ການຄ້າ
ແຂວງບໍລິຄໍາໄຊ

ໄກສອນ ຈັນສີນາ
Kaysone CHANSYNA

ຕິດຕໍ່ພົວພັນ:

ນ. ສົມຣີໄທ ບຸຈະເລີນ 020 22118333